## ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການເຮັດນາ

(ສະບັບທົດລອງ)



ຂຽນໂດຍ: ທ່ານ ນາງທ່ຽງ ສີລິພົນ
ຂໍ້ມູນຈາກ: ບ້ານ ໂພນທອງ ເມືອງ ນາຊາຍທອງ
ນະຄອນຫລວງວຽງຈັນ

ປີ2006

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com

# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການເຮັດນາ

ຮິບໂຮມ ແລະຈັດໜ້າໂດຍ: ນາງ ນ່າ ຄຳເຮືອງ

ຮຽບຮຽງໂດຍ: ອ.ຈ ໂພໄຊ ຈັນທະວົງສາ

ອ.ຈ ເກດມະນີ ບັນດາສັກ

ອ.ຈ ຄຳໄຫວ

ອ.ຈ ລັ່ງ ແສງດາລາ

ອ.ຈ ທອງຂັນ

ແຕ້ມໂດຍ: ທ້າວ ສົມເພັດ ຈັນທະລາ

ເຈົ້າຂອງ: ພະແນກສຶກສານະຄອນຫລວງວຽງຈັນແລະ

ສູນອົບຮົມຮ່ວມພັດທະນາ

Pestalozzi Children's Foundation
A world for Children

PDF created with pdfFactory Pro trial version www.pdffactory.com

# ຄຳນຳ

ປຶ້ມພູມປັນຍາທ້ອງຖິ່ນຫົວນີ້ໄດ້ມາຈາກການຂຽນຂອງຊາວບ້ານແລະອາສາສະໝັກເຊິ່ງໄດ້ຮຽບຮຽງເບື້ອງຕົ້ນຈາກຄະນະອຳນວຍການສູນອົບຮົມຮ່ວມພັດທະນາແລະພະແນກສຶກສານະຄອນຫຼວງວຽງຈັນ

ປຶ້ມຫົວນ້ອຍຫົວນີ້ໄດ້ບັນຈຸເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດໜຶ່ງໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາແລະສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນປະຖົມ ປໍ 1 ປໍ 2 ແລະບົດທີ່ຍາກກໍສອນຊັ້ນໃຫຍ່ຂຶ້ນໄປ.

ຄະນະຈັດທຳຫວັງຄິດວ່າປຶ້ມຫົວນີ້ຄົງເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກທີ່ຈະໄປສອນເດັກປະຖົມບໍ່ຫຼາຍກໍໜ້ອຍ

ຄະນະຈັດທຳຄິດວ່າຍັງມີຫຼາຍເນື້ອໃນທີ່ບໍ່ທັນພຽງພໍແລະຂາດໄປຫວັງວ່າຄົງໄດ້ຮັບການຕິຊົມຈາກທຸກທ່ານ ພວກເຮົາພ້ອມທີ່ຈະປັບປຸງນຕາມຄວາມເໝາະສົມ.

ຄະນະຈັດທຳ

PDF created with pdfFactory Pro trial version www.pdffactory.com

## ຄວາເປັນມາຂອງການເຮັດນາ

ຄວາມເປັນມາຂອງການເຮັດນານີ້ແມ່ນປູ່ຍ່າຕານາຍໄດ້ສືບທອດກັນມາໃຫ້ ພໍ່ແມ່ ແລະລູກຫລານໄດ້ເຮັດນາລ້ຽງຊີວິດການເປັນຢູ່ຂອງຄົນໃຫ້ພົ້ນຈາກຄວາມອຶດຫິວ ແລະຄວາມທຸກຍາກ. ສະນັ້ນພວກເຮົາຈິ່ງພາກັນເຮັດນາມາຈົນເຖິງປັດຈຸບັນ. ເພາະວ່າເຂົ້າແມ່ນອາຫານຊະນິດໜຶ່ງທີ່ຄົນເຮົາຂາດບໍ່ໄດ້ ຖ້າຄົນເຮົາຂາດທາດອາຫານຊະນິດນີ້ກໍອາດຈະຕາຍໄດ້.

PDF created with pdfFactory Pro trial version www.pdffactory.com

# ອຸປະກອນໃນການເຮັດນາ

ແນວເຂົ້າປູກ



ຈົກ, ພ້າ





ຊວ້ານ



PDF created with pdfFactory Pro trial version www.pdffactory.com

ໄຖ , ເຊືອກ





ຄວາຍ



ແອກ



PDF created with pdfFactory Pro trial version www.pdffactory.com

## ວິທີການເຮັດນາ

ເຮົາໄປຖາງຫລືຫລົກຫຍ້າໃຫ້ແປນເສຍກ່ອນແລ້ວຈຶ່ງຄ່ອຍໄຖພໍໄດ້ປະມານ 7-10 ວັນ. ຈາກນັ້ນເຮົາກໍມາໄຖອີກ ແລະ ຄາດໃຫ້ລະອຽດພ້ອມແລ້ວຈາກນັ້ນກໍເອົາເຂົ້າປູກທີ່ເຮົາແຊ່ນັ້ນມາຫວ່ານໃສ່ໄຮ່ນາທີ່ເຮົາຄາດແລ້ວ (ເອີ້ນວ່າຕາກ້າ) ພໍກ້າໄດ້ເດືອນ ເຮົາກໍຈະຫລົກໄປດໍາໄສ່ໄຮ່ນາ. ພໍໄດ້ປະມານ 15 ວັນເຮົາກໍເອົາຝຸ່ນໄປຫວ່ານໃສ່, ເບິ່ງນໍ້ານາໃຫ້ສະໝໍ່າສະເໝີ ແລະຕິດຕາມເບິ່ງພະຍາດທີ່ມັກເກີດກັບນາເຂົ້າແລ້ວບົວລະບັດຮັກສາຈົນຮອດເຂົ້າຈະເປັນເກັບກ່ຽວ.

## ຫຼັກການທີ່ສໍາຄັນ:

**ເຫດຜົນ:**

ກ່ອນທີ່ເພິ່ນຈະລົງມືເຮັດນາເພິ່ນຕ້ອງກະກຽມແນວພັນແລ້ວຕ້ອງໄຖດິນນາປະໄວ້. ການໄຖເທື່ອທໍາອິດເພິ່ນເອີ້ນວ່າ: ໄຖຮຸດ ເພື່ອໃຫ້ຫຍ້ານັ້ນປີ້ນລົງແລ້ວປະໄວ້ 15 ວັນເພື່ອໃຫ້ຫຍ້າຕາຍ ແລະເນົ່າເປື່ອຍກາຍເປັນຝຸ່ນໃສ່ນາ. ແລະດິນນາເຮົາກໍຈະບໍ່ແກ່ນຍັງຊ່ວຍປັບສະພາບຂອງດິນ ແລະເຮັດໃຫ້ກ້າທີ່ປັກດໍາລົງໄປນັ້ນງາມ.

PDF created with pdfFactory Pro trial version www.pdffactory.com

<u>**ຄຸນປະໂຫຍດຂອງການເຮັດໄຮ່ ເຮັດນາ**</u>

ການເຮັດນາແມ່ນມີຄຸນປະໂຫຍດຫລາຍທີ່ສຸດເພາະວ່າຖ້າຄົນເຮົາບໍ່ມີເຂົ້າກິນ ຄອບຄົວກໍຈະຫຍຸ້ງຍາກ ແລະສັບສົນທີ່ສຸດ. ເພາະການເຮັດນານີ້ຖ້າເຮົາມີເຂົ້າກິນທຸກຢ່າງກໍຈະດີຂຶ້ນ ການທີ່ເຮົາເຮັດນານີ້ຖ້າເຮົາເຮັດຫລາຍມັນເຫລືອກິນແລ້ວເຮົາຂາຍເອົາເງິນມາໝູນໃຊ້ໃນຄອບຄົວຕື່ມອີກ. ສະນັ້ນການເຮັດໄຮ່ເຮັດນານີ້ຈຶ່ງມີຄຸນປະໂຫຍດໃຫ້ແກ່ຄົນລາວເຮົາທີ່ສຸດ.

**ລຳ: ການເຮັດນາ**

ຂ້ອຍຊິຖາມຂ່າວເຈົ້າ ການເຮັດໄຮ່ທຳສວນ<br>
ໄດ້ສົມຄວນ ບໍ່ນໍເຈົ້າສ່ວນເຂົ້ານາປີນີ້<br>
ຝົນຕົກດີ ຫຼືວ່າແລ້ງ<br>
ຝົນຕົກແຮງ ຫຼືວ່າຄ່ອຍ<br>
ການຮັບຜົນຂອງເຈົ້າ ປີນີ້ໄດ້ຫຼາຍແທ້ບໍນໍທ່ານເອີຍ

PDF created with pdfFactory Pro trial version www.pdffactory.com

## ເຊີ້ງ: ພາກັນເຮັດນາ

| | |
|---|---|
| ເຮີຍໝູ່ເຮີຍໝູ່ | ມາໄວເດີໝູ່ |
| ຖ້າໃຜຢາກຮູ້ | ເຮັດນາເຮັດໄຮ່ |
| ຊາວລາວເຮົາໄດ້ | ຖະນຸຖະໜອມ |
| ພວກເຮົາຈິ່ງພ້ອມ | ພາກັນເຮັດນາ |
| ທີ່ເຄີຍເຮັດມາ | ພາກັນສືບຕໍ່ |
| ອີ່ແມ່ອີ່ພໍ່ | ເພິ່ນບອກເພິ່ນສອນ |

## ເພງ: ແຂ່ງຂັນກັນກ່ຽວເຂົ້າ

| | |
|---|---|
| ເຊີນເດີເຊີນມາຢາມ | ທົ່ງນາບ້ານນ້ອງ |
| ສຽງລຳສຽງຮ້ອງ | ດັງກ້ອງທົ່ວທົ່ງນາ |
| ຊາວປະຊາພ້ອມພຽງ | ສີໂພນທອງພວມແຂ່ງຂັນ |
| ສຽງພືດດັງສະນັ່ນ | ແຂ່ງຂັນກັນກ່ຽວເຂົ້າ |
| ຕື່ນເດີກລຸກເຊົ້າ | ມຸ່ງສູ່ການຜະລິດ. |

PDF created with pdfFactory Pro trial version www.pdffactory.com

## ລຳ: ການໄຖນາ

| | |
|---|---|
| ພໍແຕ່ມາເຫັນໜ້າ | ວາຈາຢາກຖາມຂ່າວ |
| ຊາວໄຮ່ນາພີ່ນ້ອງ | ພໍໄດ້ຊື່ນໃຈ |
| ຂໍຝາກຄວາມຮັກໝັ້ນ | ສຳພັນຢ່າປະປ່ອຍ |
| ຂໍໃຫ້ຊາວພີ່ນ້ອງ | ເຮັດໄຮ່ໄຖນາ |
| ປວງປະຊາຊົນລາວ | ຢູ່ສະບາຍຫາຍຮ້ອນ |
| ປຽບດັ່ງປາຕົກຄອນ | ຊິຫຼອນຊົມນ້ຳໃໝ່ |
| ໃຫ້ຊາວນາເຮົາໄດ້ | ຢືນໝັ້ນຊົ່ວນິລັນ ທ່ານເອີຍ |

PDF created with pdfFactory Pro trial version www.pdffactory.com

## ຮູບ ແລະ ປະຫວັດຂອງຜູ້ຂຽນ



ຊື່ ທ່ານນ. ທ່ຽງ    ນາມສະກຸນ ສີລິພົນ

ອາຍຸ 32  ປີ, ອາຊີບ ເຮັດນາ

## ເຫດຜົນຂອງການຂຽນປຶ້ມບົດນີ້:

ຍ້ອນວ່າຢາກບອກໃຫ້ລູກໃຫ້ຫລານຂອງພວກເຮົາໄດ້ຮູ້ຈັກວ່າ ການເຮັດໄຮ່ເຮັດນານີ້ແມ່ນອາຊີບຕົ້ນຕໍຂອງປະຊາຊົນເຮົາ. ເພາະວ່າ ເຂົ້າແມ່ນອາຫານສຳຄັນຂອງຄົນເຮົານອກຈາກນັ້ນ ຖ້າຫາກຄອບຄົວ ໃດມີເຂົ້າກິນຫລາຍຄອບຄົວນັ້ນກໍຈະອຸດົມສົມບູນ. ສະນັ້ນເຮົາເອົາຫົວ ຂໍ້ນີ້ເພື່ອສອນລູກສອນຫລານຂອງພວກເຮົາຕໍ່ໆໄປ.

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com